ກະຊວງສາທາລະນະສຸກ

# ຕົ້ນໄມ້ ແລະ ພືດເປັນຢາ
# ທີ່ກະຊວງສາທາລະນະສຸກຄຸ້ມຄອງ








ນະຄອນຫຼວງວຽງຈັນ 2013

ສະໜັບສະໜູນການພິມໂດຍ:
ອົງການອະນາໄມໂລກ

## ຄະນະຊີ້ນຳ

| | |
|---|---|
| ທ່ານ ດຣ. ສົມທະວີ ຈາງວິສົມມິດ | ຫົວໜ້າກົມອາຫານ ແລະ ຢາ |
| ທ່ານ ດຣ. ນ. ລຳພອນ ສີຫາຄັງ | ຮອງຫົວໜ້າກົມອາຫານ ແລະ ຢາ |
| ທ່ານ ຣສ. ດຣ. ກອງມະນີ ສີດາລາ | ຮອງຫົວໜ້າ ສະຖາບັນການແພດ ແລະ ການຢາພື້ນເມືອງ |
| ທ່ານ ດຣ. ບຸນເລື່ອນ ດວງເດືອນ | ຮອງຫົວໜ້າພະແນກຄຸ້ມຄອງຢາພື້ນເມືອງ, ກອຢ |

## ບັນນາທິການ

| | |
|---|---|
| ທ່ານ ດຣ. ສົມທະວີ ຈາງວິສົມມິດ | ຫົວໜ້າກົມອາຫານ ແລະ ຢາ |
| ທ່ານ ດຣ. ນ. ລຳພອນ ສີຫາຄັງ | ຮອງຫົວໜ້າກົມອາຫານ ແລະ ຢາ |
| ທ່ານ ຣສ. ດຣ. ກອງມະນີ ສີດາລາ | ຮອງຫົວໜ້າ ສະຖາບັນການແພດ ແລະ ການຢາພື້ນເມືອງ |

## ຄະນະຜູ້ຮຽບຮຽງ

| | |
|---|---|
| ພກ.ມົວຈັນ ໄຊວົ | ຫົວໜ້າພະແນກເພສັດຊັບພະຍາກອນ, ສພມ |
| ພກ. ອ່ອນວິໄລ ສຸລິຍາ | ຮອງຫົວໜ້າພະແນກເພສັດຊັບພະຍາກອນ, ສພມ |
| ພກ. ວົງຕະກຸນ ສົມສະໝຸດ | ວິຊາການ ພະແນກຄຸ້ມຄອງຢາພື້ນເມືອງ, ກອຢ |
| ພກ. ວົງສີ ພັນທະວົງ | ວິຊາການ ພະແນກຄຸ້ມຄອງຢາພື້ນເມືອງ, ກອຢ |
| ພກ. ອະພິນັນ ແສງທອງຄຳ | ວິຊາການ ພະແນກຄຸ້ມຄອງຢາພື້ນເມືອງ, ກອຢ |

# ຄໍານໍາ

ສປປ ລາວ ມີຄວາມອຸດົມຮັ່ງມີໄປດ້ວຍຊັບພະຍາກອນທໍາມະຊາດທີ່ເປັນຢາ ແລະ ປະຊາຊົນ ລາວ ມີມູນເຊື້ອໃນການຮັກສາສຸຂະພາບດ້ວຍຢາພື້ນເມືອງ ທີ່ບັນພະບູລຸດເຮົາ ໄດ້ສືບທອດໄວ້. ພັກ ແລະ ລັດຖະບານໄດ້ມີທິດທາງນະໂຍບາຍ ໃນການນໍາໃຊ້ຢາພື້ນເມືອງ ສົມທົບກັບຢາຫຼວງເຂົ້າໃນການກັນ, ປິ່ນປົວ ແລະ ສົ່ງເສີມສຸຂະພາບປະຊາ ຊົນບັນດາເຜົ່າຢ່າງກວ້າງຂວາງ.

ປະຈຸບັນນີ້ເຫັນວ່າສະພາບການຂຸດຄົ້ນຊັບພະຍາກອນທໍາມະຊາດທີ່ເປັນຢາ ເພື່ອຮັບໃຊ້ການ ຜະລິດພາຍໃນ ແລະ ສົ່ງອອກ ໄດ້ມີການຂະຫຍາຍຕົວ ຢ່າງກວ້າງຂວາງ. ຄຽງຄູ່ກັນນັ້ນ ການປະສານງານ ລະຫວ່າງຂະແໜງການທີ່ກ່ຽວຂ້ອງ ທີ່ເຮັດໜ້າທີ່ໃນການ ຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນ, ເກັບຊື້, ເກັບກູ້, ຜະລິດ, ປຸງແຕ່ງ, ຖອດຣີດ ຊັບພະຍາກອນທໍາມະຊາດທີ່ເປັນຢາຍັງບໍ່ທັນໄດ້ປະຕິບັດຢ່າງຮັດກຸມ, ຍັງມີການເກັບກູ້ແບບ ຊະຊາຍ, ບໍ່ຖືກຕາມຫຼັກວິຊາການ ແລະ ບໍ່ມີການປູກທົດແທນ ເຮັດໃຫ້ມີການທໍາ
ລາຍຊັບພະຍາກອນທໍາມະຊາດ ທີ່ເປັນຢາຊຶ່ງບາງສະນິດເກືອບ ຈະສູນພັນໄປ.

ກົມອາຫານ ແລະ ຢາ ສົມທົບກັບ ສະຖາບັນການແພດ ແລະ ການຢາພື້ນເມືອງ, ກະຊວງສາທາລະນະສຸກ ເຫັນໄດ້ຄວາມສໍາຄັນ ຂອງການປົກປັກຮັກສາຊັບພະຍາກອນທໍາ
ມະຊາດທີ່ເປັນຢາ ຈຶ່ງໄດ້ຄົ້ນຄວ້າ ຈັດພິມປຶ້ມສະບັບນີ້ອອກ ເພື່ອເປັນການໃຫ້ຂໍ້ມູນດ້ານຊັບພະຍາກອນທໍາມະຊາດທີ່ເປັນຢາ ໂດຍສະເພາະ 50 ລາຍການ ທີ່ນອນຢູ່ໃນຄວາມຮັບຜິດຊອບຂອງຂະແໜງ ການສາທາລະນະສຸກ ພ້ອມທັງເປັນການໃຫ້ຄວາມຮູ້ແກ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕະຫຼອດເຖິງປະຊາຊົນບັນດາເຜົ່າ ເພື່ອໃຫ້ຄວາມຮ່ວມມື ໃນການຄຸ້ມຄອງ ປົກປັກຮັກສາ ຊັບພະຍາກອນທໍາມະ
ຊາດທີ່ເປັນຢາດັ່ງກ່າວໃຫ້ໄດ້ມີການນໍາໃຊ້ແບບຍືນຍົງ ແລະ ສອດ ຄ່ອງຕາມຫຼັກວິຊາການ.

ປຶ້ມບັນຊີພືດທີ່ເປັນຢາສະບັບນີ້ ໄດ້ສ້າງຂຶ້ນໂດຍອີງຕາມດໍາລັດ ວ່າດ້ວຍຊັບພະ ຍາກອນທໍາມະຊາດທີ່ເປັນຢາ ສະບັບ ເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003 ແລະ ແຈ້ງການ ສະບັບເລກທີ 252/ກຊສ, ລົງວັນທີ 06 ມິຖຸນາ 2007. ເນື້ອໃນຂອງປຶ້ມປະກອບດ້ວຍ ຊື່ພາສາລາວ, ຊື່ອື່ນໆ, ຊື່ວິທະຍາສາດ, ຕະກຸນ, ພັນລະນາລັກສະນະພືດແຫ້ງ, ສ່ວນໃຊ້, ຄຸນປະໂຫຍດ ແລະ ຮູບພາບ. ຈຸດປະສົງຫຼັກ ເພື່ອເປັນບ່ອນອີງ ໃນການຄຸ້ມຄອງ, ການປົກປັກຮັກສາ ແລະ ການພິຈາລະນາອອກອະນຸມັດໃຫ້ການດໍາເນີນທຸລະກິດ ຂຸດຄົ້ນ, ເກັບຊື້, ປຸງແຕ່ງ, ຜະລິດ, ຖອດຣີດ ເປັນຜະລິດຕະພັນເຄິ່ງສໍາເລັດຮູບ ຫຼື ສໍາເລັດຮູບຕາມກົດໝາຍວ່າດ້ວຍຢາ

ແລະ ຜະລິດຕະພັນການແພດ, ເພື່ອນຳໃຊ້ເຂົ້າໃນການກັນ ແລະ ປິ່ນປົວສຸຂະພາບຕາມແນວທາງນະໂຍບາຍພັກ ແລະ ລັດຖະບານວາງອອກ.

ເນື່ອງຈາກວ່າ ການຈັດພິມປື້ມເຫຼັ້ມນີ້ເປັນຄັ້ງທຳອິດ ເນື້ອໃນ, ຮູບພາບ ແລະ ຈຳນວນລາຍການ ຈຶ່ງອາດຈະຍັງ ບໍ່ທັນຄົບຖ້ວນ ແລະ ສົມບູນ, ຖ້າຫາກຍັງມີ ຈຸດໃດ ທີ່ຍັງຂາດຕົກບົກຜ່ອງ ແລະ ບໍ່ສອດຄ່ອງ ຂໍຄວາມຮ່ວມມືມາຍັງບັນດາທ່ານຊ່ວຍ ມີຄຳເຫັນມາຍັງກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ເພື່ອຈະນຳມາພິຈາລະນາເປັນບ່ອນອີງໃນການ ປັບປຸງແກ້ໄຂໃນຂັ້ນຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ 9 ເມສາ 2013

ຫົວໜ້າ ກົມ

ດຣ.ສົມທະວີ ຈາງວີສົມມິດ

# ສາລະບານ

1. ກູດຕີນຮຸ້ງ (Koud Tin Houng) Fern root .......... 7
2. ກົງສະເດັນ (Kong Sa Dene) .......... 8
3. ຊື່ທ້ອງຖິ່ນ: ຂົມລະຫວານຈໍ້ (Khom La Vanh Chor) .......... 9
4. ຂີງແຄງປາກັ້ງ (Khing Kheng Pa Kang) .......... 10
5. ຂີງຝາ (Khing PHa) .......... 11
6. ຂະຍອມພູ (Kha Yom Phou) .......... 12
7. ແຄ (Khae) .......... 13
8. ຈັນໄດແດງ (Chan Dai Deng) .......... 14
9. ສົ້ມມໍ (Som Mor) .......... 15
10. ແສງເບື່ອ (Seng Beua) .......... 16
11. ແສງຄຳຕົ້ນ (Khing Fa) .......... 17
12. ສ່ອງຟ້າ (Xong Fa) .......... 18
13. ສີໄຄຕົ້ນ (Si Khai ton) .......... 19
14. ຢິກບໍ່ຖອງ (Yik Bor Thong) .......... 20
15. ຍໍໂຄກ (Yor Khok) .......... 21
16. ດອກເຜີ້ງທຸກຊະນິດ ໃນສະກຸນ *Dendrobium* spp.(Dok Pheung ) .......... 22
17. ຕຸມກາແດງ (Tum Ka Deng) .......... 23
18. ຫົວຕ່ອມເງິນ (Hoa Tom Ngeun) .......... 24
19. ຕີນເປັດ (Tin Ped) .......... 25
20. ຝາງແດງ (Fang Deng) .......... 26
21. ມັນອ້ອນລີງ (Man Onh Ling) .......... 27
22. ມັນຂາໄກ່ (Man Kha Kai) .......... 28
23. ຢາຫົວ (Ya hoa) .......... 29
24. ຫົວສາມສິບ (Hoa Sam Sib) .......... 30
25. ຫວ້ານໃບລາຍ (Vane Bai Lai) .......... 31

26. ຫາດມີ້ (Hat Mee)....32
27. ເຫັດທີ່ເປັນຢາ ບາງຊະນິດ(Het) ເປັນຕົ້ນແມ່ນ:....33
28. ອ່ຽນດ່ອນ (Ien Don)....34
29. ແຝກຫອມ (Fek Hom)....35
30. ເຄືອແຮມ ( Kheua Haem )....36
31. ກຳລັງເສືອໂຄ່ງໜາມ (Kam Lang Seua Khong Nam)....37
32. ເກດສະໜາ (Ket Sa Na)....38
33. ຫວ້ານຫົວຕໍ່ (Vane Hoa Tor)....39
34. ຕີນຮຸ້ງ (Tin Houng)....40
35. ປອມບີກະທິງ ( Pom Bi Ka Thing)....41
36. ເຂົາໄກ້ (Khao Kai)....42
37. ໝາກແໜ່ງທຸກຊະນິດ (Mak Naeng)....43
38. ໝາກຈອງບານ (Mak Chong Ban)....44
39. ຫົວສາມພັນຮູ (Hoa Sam Phanh Hou)....45
40. ປິບປີແດງ (Pit pi daeng)....46
41. ເລັບມືນາງ (Lep Meu Nang)....47
42. ໜາມເລັບຮຸ້ງ (Nam Lep Houng)....48
43. ລື້ຫຼັງລາຍ (Leu Lang Lai)....49
44. ຢານາງຊ້າງ (Ya Nang Xang)....50
45. ອີ່ຕູ່ຕົ້ນ (I Tu Ton)....51
46. ໄມ້ທະໂລ້. (Mai Tha Lo)....52
47. ມ້ວຍ. (Mouay )....53
48. ຫວ້ານຫາງຊ້າງ. (Vanh Hang Xang)....54
49. ເຄືອນົມໜູ. (Kheua Nom Nou)....55
50. ຫົວດູກເດືອທຸກຊະນິດ. (Hoa Duk Deua)....56
ເອກະສານອ້າງອີງ....57

## 1. ກູດຕີນຮຸ້ງ (Koud Tin Houng) Fern root

**ຊື່ວິທະຍາສາດ : *Helminthostachys zeylanica* Hook.f.**

**Syn. *Helminthostachys dulcis* Kaulf.**

***Osmuunda zeylanica* L.**

***ຕະກຸນພືດ* : OPHIOGLOSSACEAE**

**ຊື່ອື່ນໆ : ຮາກຕີນຮຸ້ງ, ຜັກຕີນກວາງ, ຜັກຕີນຂີ້ເຂັບ, ກູດນົກຍຸງ, ກູດຈ໊ອງ, ກູດຕີນກວາງ**

**ພັນລະນາລັກສະນະພືດແຫ້ງ:** ຮາກເຫົ້ງາສີດຳແກມສີນ້ຳຕານ, ມີຮາກຈຳນວນຫຼາຍອອກຈາກລຳຮາກເຫງົ້າຄ້າຍຄືຕີນຂີ້ເຂັບ.

**ສ່ວນໃຊ້ເຮັດຢາ:** ຮາກເຫງົ້າ.

**ຄຸນປະໂຫຍດ :** ຮາກເຫງົ້ານຳໃຊ້ເປັນຢາແກ້ໄຂ້, ເປັນຢາບຳລຸງ ແລະ ເປັນສິນຄ້າສົ່ງອອກໄປຈີນເພື່ອເປັນຢາພື້ນເມືອງ.





## 2. ກົງສະເດັນ (Kong Sa Dene)

**ຊື່ວິທະຍາສາດ : C*roton nanus* Gagnepain**

***ຕະກຸນພືດ*** **: EUPHORBIACEAE**

**ພັນລະນາລັກສະນະພືດແຫ້ງ:** ໝົດຕົ້ນມີລິດຂົມ

**ສ່ວນໃຊ້ເຮັດຢາ:** ໝົດຕົ້ນ

**ຄຸນປະໂຫຍດ :** ບໍາລຸງ, ປົວເບົາຫວານ





## 3. ຊື່ທ້ອງຖິ່ນ: ຂົມລະຫວານຈໍ້ (Khom La Vanh Chor)

**ຊື່ວິທະຍາສາດ:** ***Euodia lepta*** **L.**
**Syn.** ***Glycosmis parviflora*** **(Sims.) Little**

**ຕະກຸນ: RUTACEAE**

**ພັນລະນາລັກສະນະພືດແຫ້ງ:** ເນື້ອໄມ້ແຫ້ງສີຂາວນວນ
**ສ່ວນໃຊ້:** ຮາກ, ລຳ
**ຄຸນປະໂຫຍດ:** ປົວຕຸ່ມຄັນ, ຂີ້ຂະຍິ, ໄຂ້ ແລະ ຕັບ.



## 4. ຂີງແຄງປ່າກັ້ງ (Khing Kheng Pa Kang)

**ຊື່ວິທະຍາສາດ : *Homalomena occulta* (Lour.) Schott**

***ຕະກຸນພືດ*  : ARACEAE**

**ຊື່ອື່ນໆ : ບອນຫອມ**

**:ພັນລະນາລັກສະນະພືດແຫ້ງ:** ຮາກຫົວແຫ້ງມີເສັ້ນໄຍ ແລະ ມີສີນ້ຳຕານເຂັ້ມ, ມີກິ່ນຫອມ

**ສ່ວນໃຊ້ເຮັດຢາ:** ຫົວ ເຫງົ້າ
**ຄຸນປະໂຫຍດ :** ປະດົງຂໍ່



## 5. ຂີງຝາ (Khing PHa)

**ຊື່ວິທະຍາສາດ : *Polygonatum kingianum* Coll. et Hemsl.**

***ຕະກຸນພືດ*** **: CONVALLARIACEAE**

**ຊື່ອື່ນໆ : ເສດກະສັດ,**

**ພັນລະນາລັກສະນະພືດແຫ້ງ:** ຮາກຫົວແຫ້ງມີສີດຳແກມນ້ຳຕານເຂັ້ມ

**ສ່ວນໃຊ້ເຮັດຢາ:** ຮາກຫົວ

**ຄຸນປະໂຫຍດ :** ບຳລຸງ, ປົວເບົາຫວານ



## 6. ຂະຍອມພູ (Kha Yom Phou)

**ຊື່ວິທະຍາສາດ : *Rauvolfia serpentina* (L.) Benth. ex Kurz.(ຂະຍອມພູນ້ອຍ)**

**And *Rauvolfia cambodiana* Pierre ex Pit. (ຂະຍອມພູໃຫຍ່)**

***ຕະກຸນພືດ*** **: APOCYNACEAE**

**ພັນລະນາລັກສະນະພືດແຫ້ງ:** ຮາກມີສີຂາວນວນແກມສີນ້ຳຕານ, ລົດຂົມ

**ສ່ວນໃຊ້ເຮັດຢາ:** ຮາກ

**ຄຸນປະໂຫຍດ :** ລົດຄວາມດັນເລືອດ





## 7. ແຄ (Khae)

**ຊື່ວິທະຍາສາດ : *Cinnamomum cassia* Blume**

***Synonym*** **: *Cinnamomum aromaticum* Nees**

***ຕະກຸນພືດ*** **: LAURACEAE**

**ຊື່ອື່ນໆ :** ແຄ່ຫອມ

**ພັນລະນາລັກສະນະພືດແຫ້ງ:** ເປືອກສີນ້ຳຕານແກມສີດຳມີກິ່ນຫອມ

**ສ່ວນໃຊ້ເຮັດຢາ:** ເປືອກ

**ຄຸນປະໂຫຍດ :** ບຳລຸງ, ບຳລຸງຫົວໃຈ, ແກ້ຍິ່ງ.



## 8. ຈັນໄດແດງ (Chan Dai Deng)

**ຊື່ວິທະຍາສາດ** : ***Dracaena cambodiana*** **Pierre ex Gagnepain**

***ຕະກຸນພືດ*** : **DRACAENACEAE**

**ພັນລະນາລັກສະນະພືດແຫ້ງ:** ສີແດງເຂັ້ມແກມສີນ້ຳຕານເຂັ້ມແຊ່ໃສ່ນ້ຳອອກສີແດງເຂັ້ມ.

**ສ່ວນໃຊ້ເຮັດຢາ:** ແກ່ນຕົ້ນ, ກາບເປືອກທີ່ແກ່ຕາຍແລ້ວ.

**ຄຸນປະໂຫຍດ :** ຟອກເລືອດ



## 9. ສົ້ມມໍ (Som Mor)

**ຊື່ວິທະຍາສາດ : *Terminalia chebula* (Gaertn.) Retz.**

***Synonyms* : *Terminalia chebula* Retz., var. *tomentella* (Kurz.)**
***Terminalia reticulata* Roth.;**

***ຕະກຸນພືດ* : COMBRETACEAE**

**ຊື່ອື່ນໆ** : ສົ້ມມໍດົງ

**ພັນລະນາລັກສະນະພືດແຫ້ງ:** ໝາກແຫ້ງສີດຳ, ສີຟ້າເຂັ້ມປົນສີຂຽວແກມເຫຼືອງອ່ອນ

**ສ່ວນໃຊ້ເຮັດຢາ:** ໝາກ

**ຄຸນປະໂຫຍດ :** ແກ້ໄອ



## 10. ແສງເບື່ອ (Seng Beua)

**ຊື່ວິທະຍາສາດ** : ***Strychnos nux-vomica* L.**

***ຕະກຸນພືດ*** : **LOGANIACEAE**

**ຊື່ອື່ນໆ : ຖະແລງ**

**ພັນລະນາລັກສະນະພືດແຫ້ງ:** ແກ່ນໝາກມົນແປສີນ້ຳຕານແກມສີຂາວນວນ.

**ສ່ວນໃຊ້ເຮັດຢາ:** ແກ່ນໝາກ

**ຄຸນປະໂຫຍດ :** ເບື່ອ, ຕ້ານການຫົດຮັດ, ປະດົງຂໍ່, ເຈັບຂໍ່ ແລະ ອຳມະພາດ



## 11. ແສງຄຳຕົ້ນ (Khing Fa)

**ຊື່ວິທະຍາສາດ : *Terminalia nigrovenulosa* Pierre ex Lanessan**

**Synonym: *Terminalia triptera* Stapf**

***ຕະກຸນພືດ*    : COMBRETACEAE**

**ຊື່ອື່ນໆ**    : ແສງຄຳ, ສີງຄຳ, ສັງຄຳ

**ພັນລະນາລັກສະນະພືດແຫ້ງ:** ເປືອກແຫ້ງສີນ້ຳຕານແກມສີນ້ຳໝາກກ້ຽງ

**ສ່ວນໃຊ້ເຮັດຢາ:** ເປືອກ

**ຄຸນປະໂຫຍດ :** ບຳລຸງ, ແກ້ທ້ອງບິດທ້ອງຖອກ



## 12. ສ່ອງຟ້າ (Xong Fa)

**ຊື່ວິທະຍາສາດ** : *Clausena guillauminii* Tanaka

- *Clausena harmandiana* Pierre (ຊ່ອງຟ້າດົງ)

***ຕະກຸນພືດ*** : **RUTACEAE**

**ຊື່ອື່ນໆ** : **ຊ່ອງຟ້າດົງ**

**ພັນລະນາລັກສະນະພືດແຫ້ງ:** ຮາກສີນ້ຳຕານແກມສີຂາວນວນ, ມີກິ່ນຫອມ.

**ສ່ວນໃຊ້ເຮັດຢາ:** ຮາກ

**ຄຸນປະໂຫຍດ :** ເຈັບແຂ້ວແມງ, ເລືອດເປັນພິດ, ລົດສະດວງ ແລະ ແກ້ບວມ.



## 13. ສີໄຄຕົ້ນ (Si Khai ton)

**ຊື່ວິທະຍາສາດ : *Litsea cubeba* (Lour.) Pers.**

***Synonym* : *Laurus cubeba* Lour.**

***ຕະກຸນພືດ*** : **LAURACEAE**

**ຊື່ອື່ນໆ : ໝາກສັງເຄີ**

**ພັນລະນາລັກສະນະພືດແຫ້ງ:** ເປືອກສີດໍາ, ແກ່ນລໍາສີຂາວນວນ, ມີກິ່ນຫອມ.

**ສ່ວນໃຊ້ເຮັດຢາ:** ລໍາ, ເປືອກ

**ຄຸນປະໂຫຍດ :** ແກ້ວິນວຽນ



## 14. ຢິກບໍ່ຖອງ (Yik Bor Thong)

**ຊື່ວິທະຍາສາດ** : ***Eurycoma longifolia*** **Jack**

***Synonyms*** : ***Crassula pinnata*** **Lour.,** ***Eurycoma merguensis*** **Planch,** ***Manotes asiatica*** **Gagnep.,** ***Picroxylon siamense*** **Warb.**

**ຕະກຸນພືດ** : **SIMAROUBACEA**

**ຊື່ອື່ນໆ** : **ອ່ຽນດ່ອນໃຫຍ່**

**ພັນລະນາລັກສະນະພືດແຫ້ງ:** ເປືອກຮາກສີນ້ຳຕານ ແລະ ແກ່ນຮາກສີຂາວນວນ, ມີລົດຂົມ

**ສ່ວນໃຊ້ເຮັດຢາ:** ຮາກ, ລຳ

**ຄຸນປະໂຫຍດ :** ຮາກ ແລະ ລຳຕົ້ນຕົ້ມດື່ມປົວໄຂ້ມາເລຍ ແລະ ຕົ້ມ ຫຼື ດອງເຫຼົ້າດື່ມ ບຳລຸງກຳລັງຜູ້ຊາຍ.



## 15. ຍໍໂຄກ (Yor Khok)

**ຊື່ວິທະຍາສາດ : *Morinda tinctoria* Roxb.**

**Synonym: *Morinda elliptica* Ridl., *Morinda tomentosa* Roth**

***ຕະກຸນພືດ*** **: RUBIACEAE**

**ຊື່ອື່ນໆ : ຍໍປ່າ**

**ພັນລະນາລັກສະນະພືດແຫ້ງ:** ໝາກສີດໍາມີແກ່ນຈໍານວນຫຼາຍ

**ສ່ວນໃຊ້ເຮັດຢາ:** ໝາກ

**ຄຸນປະໂຫຍດ :** ດັດສະເໜີຮອບປະຈໍາເດືອນ, ໄລ່ລົມ, ແກ້ໄອ, ບໍາລຸງ, ປົວຕັບ- ບີ, ແກ້ເຈັບສຽບ ແລະ ແກ້ຮາກ



## 16. ດອກເຜິ້ງທຸກຊະນິດ ໃນສະກຸນ *Dendrobium* spp.(Dok Pheung )

**ຊື່ວິທະຍາສາດ : *Dendrobium* spp.**

**ຕະກຸນພືດ : ORCHIDACEAE**

**ຊື່ອື່ນໆ : ກ້ວຍໄມ້ສະກຸນຫວາຍ, ດອກເອື້ອງສະກຸນຫວາຍ**

**ພັນລະນາລັກສະນະພືດແຫ້ງ:** ລຳຕົ້ນມີປ້ອງຂໍ້ ສີເຫຼືອງແກມສີນ້ຳຕານ

**ສ່ວນໃຊ້ເຮັດຢາ: ໝົດຕົ້ນ**

**ຄຸນປະໂຫຍດ :** ບຳລຸງ, ແກ້ໄອ, ເຮັດໃຫ້ຊຸ່ມຄໍ, ຫາຍໃຈສະດວກ



## 17. ຕຸມກາແດງ (Tum Ka Deng)

**ຊື່ວິທະຍາສາດ** : ***Strychnos lucida*** **R.Br.**

***ຕະກຸນພືດ*** : **LOGANIACEAE**

**ພັນລະນາລັກສະນະພືດແຫ້ງ:** ໝາກ ແລະ ແກ່ນສີນ້ຳຕານ, ລຳຕົ້ນສີຂຽວ

**ສ່ວນໃຊ້ເຮັດຢາ:** ໝາກ, ແກ່ນລຳ

**ຄຸນປະໂຫຍດ :** ປົວໄຂ້, ເສັ້ນປະສາດ, ອຳມະພາດ ແລະ ບຳລຸງຫົວໃຈ



## 18. ຫົວຕ່ອມເງິນ (Hoa Tom Ngeun)

**ຊື່ວິທະຍາສາດ** : ***Stephania rotunda*** **Lour. (ຕ່ອມເງິນ)**

***Synonyms*** **:** ***Cissampelos glabra*** **Roxb.,**

***Stephania rotunda*** **auct. non Lour.,** ***Stephania pierrei*** **Diels**

- ***Stephania hernandifolia*** **Spreng. (ຕ່ອມເລືອດ)**

**ຕະກຸນພືດ : MENISPERMACEAE**

**ຊື່ອື່ນໆ** :ຫົວຕ່ອມເງິນ, ກິ້ງກາງດົງ

**ພັນລະນາລັກສະນະພືດແຫ້ງ:** ຫົວຊອຍຕາກແຫ້ງສີຂາວ

**ສ່ວນໃຊ້ເຮັດຢາ: ຫົວ**

**ຄຸນປະໂຫຍດ :** ລົດຄວາມດັນເລືອດ





**(ຕ່ອມເລືອດ)**

**(ຕ່ອມເງິນ)**

## 19. ຕີນເປັດ (Tin Ped)

**ຊື່ວິທະຍາສາດ : *Alstonia scholaris* (L.) R. Br**

***Synonyms*** **: *Allamanda verticilata* Desf., *Echites scholaris* Linn., *Lignum scholare* Rumph.**

***ຕະກຸນພືດ*** **: APOCYNACEAE**

**ພັນລະນາລັກສະນະພືດແຫ້ງ:** ລຳຝັດຊອຍຕາກແຫ້ງສີຂາວນວນ

**ສ່ວນໃຊ້ເຮັດຢາ:** ແກ່ນລຳ, ເປືອກ, ນ້ຳຢາງ

**ຄຸນປະໂຫຍດ :** ປິວກະເພາະ, ໄຂ້ຍຸງ, ເສັ້ນປະສາດ




## 20. ຝາງແດງ (Fang Deng)

**ຊື່ວິທະຍາສາດ** : ***Caesalpinia sappan*** **L.**

***Synonyms*** : ***Biancaea sappan*** **Todaro,** ***Caesalpinia minutiflora*** **Elm.**

***ຕະກຸນພືດ*** : **FABACEAE**

**ພັນລະນາລັກສະນະພືດແຫ້ງ**: ແກ່ນລຳສີນ້ຳຕານເຂັ້ມ ແກມແດງເຂັ້ມ

**ສ່ວນໃຊ້ເຮັດຢາ:** ແກ່ນລຳ

**ຄຸນປະໂຫຍດ :** ປົວທ້ອງບິດທ້ອງຖອກ, ຟອກເລືອດ, ໄລ່ເລືອດຮ້າຍ, ບຳລຸງເລືອດ



## 21. ມັນອ້ອນລີງ (Man Onh Ling)

**ຊື່ວິທະຍາສາດ : *Polygonum multiflorum* Thunb.**

***Synonyms*** : *Fallopia multiflora* (Thunb. ex Murray) Haraldson, *Pleuropterus multiflorus* (Thunb.) Turc.

***ຕະກຸນພືດ*** : **POLYGONACEAE**

**ພັນລະນາລັກສະນະພືດແຫ້ງ:** ຫົວແຫ້ງສີດໍາທາງໃນສີນໍ້າຕານ

**ສ່ວນໃຊ້ເຮັດຢາ:** ຫົວ

**ຄຸນປະໂຫຍດ :** ບໍາລຸງສຸຂະພາບ, ດີເຈັບແອວ, ເປັນຢາອາຍຸວັດທະນະ





## 22. ມັນຂາໄກ່ (Man Kha Kai)

**ຊື່ວິທະຍາສາດ : *Codonopsis pilosa* (Franch.) Nannf**

***Synonyms*** **:** *Codonpsis javanica* (Blume) Hook. F. *C. pilosula* (Franch.) Nannf. *Campanumoea javanica* Blume,

***ຕະກຸນພືດ*** **: CAMPANULACEAE**

**ຊື່ອື່ນໆ : ໝາກົ້ນຖ້ວຍ**

**ພັນລະນາລັກສະນະພືດແຫ້ງ:** ຫົວແຫ້ງສີນ້ຳຕານອ່ອນແກມສີຂາວເຫຼືອງ

**ສ່ວນໃຊ້ເຮັດຢາ:** ຫົວ

**ຄຸນປະໂຫຍດ :** ບຳລຸງສຸຂະພາບ, ຄຸນປະໂຫຍດຄືສົມເກົາຫຼີ



## 23. ຢາຫົວ (Ya hoa)

**ຊື່ວິທະຍາສາດ** : ***Smilax glabra*** **Wall. ex Roxb.**

***ຕະກຸນພືດ*** : **SMLACACEAE**

**ພັນລະນາລັກສະນະພືດແຫ້ງ:** ຫົວແຫ້ງສີດໍາແກມສີນໍ້າຕານເຂັ້ມ

**ສ່ວນໃຊ້ເຮັດຢາ:** ຫົວ

**ຄຸນປະໂຫຍດ :** ເປັນສ່ວນປະສົມຂອງຢາພື້ນເມືອງຫຼາຍຕໍາລາ, ເປັນບໍາລຸງ







## 24. ຫົວສາມສິບ (Hoa Sam Sib)

**ຊື່ວິທະຍາສາດ : *Stemona tuberosa* Lour.**

***ຕະກຸນພືດ*** **: STEMONACEAE**

**ຊື່ອື່ນໆ : ຮາກສາມສິບ**

**ພັນລະນາລັກສະນະພືດແຫ້ງ:** ຫົວຮາກສີນ້ຳຕານເຂັ້ມ

**ສ່ວນໃຊ້ເຮັດຢາ:** ຫົວຮາກ

**ຄຸນປະໂຫຍດ :** ປົວອັກເສບປອດ, ວັນນະໂລກປອດ ແລະ ຂ້າເຫົາ



## 25. ຫວ້ານໃບລາຍ (Vane Bai Lai)

**ຊື່ວິທະຍາສາດ : *Anoetochilus formosus* Hayata.(ຊະນິດແດງ)**

**ແລະ *Anoectochilus lylei* Rolfe ex Downie (ຊະນິດຂຽວ)**

***ຕະກຸນພືດ*  : ORCHIDACEAE**

**ຊື່ອື່ນໆ : ຫຍ້າໃບລາຍ, ເບ້ຍລາຍໄກ່ຕ໋ອກ, ເສື້ອນາງອົ້ວ, ຊຸນລູ-ນາງອົ້ວ (ລາວ), ພັນລະນາລັກສະນະພືດແຫ້ງ:**ໝົດຕົ້ນແຫ້ງສີນໍ້າຕານມີໃບລາຍ, ແຜ່ນໃບບາງ

**ສ່ວນໃຊ້ເຮັດຢາ:** ໝົດຕົ້ນ

**ຄຸນປະໂຫຍດ :** ບໍາລຸງສຸຂະພາບ, ເຮັດໃຫ້ຜິວພັນນຸ້ມນວນ ແລະ ຂາວ



*Anoetochilus formosus* **Hayata.(ຊະນິດແດງ)**



*Anoectochilus lylei* **Rolfe ex Downie (ຊະນິດຂຽວ)**

## 26. ຫາດມີ້ (Hat Mee)

**ຊື່ວິທະຍາສາດ** : *Artocarpus lakoocha* **Roxb.**

***ຕະກຸນພືດ*** : **MORACEAE**

**ພັນລະນາລັກສະນະພືດແຫ້ງ**:ເປືອກແຫ້ງສີນໍ້າຕານເຂັ້ມ

**ສ່ວນໃຊ້ເຮັດຢາ:** ແກ່ນ (ບໍ່ເອົາມອກ)

**ຄຸນປະໂຫຍດ :** ຂ້າແມ່ທ້ອງແປ



## 27. ເຫັດທີ່ເປັນຢາ ບາງຊະນິດ(Het) ເປັນຕົ້ນແມ່ນ:



**ເຫັດແປກ, Poria cocos F.A. Wolf. (Polyporaceae)**ບໍາລຸງ



**ເຫັດແດງ *Phellinus pomaceus* (Pers.)Maire**

ປົວມະເຮັງປອດ, ຕັບ ແລະ ມະເຮັງກະດູກ



**ເຫັດຫຼິນຈື່ຂອບຂາວ *Ganoderma tsugae* Murrill**

ບໍາລຸງ, ລົດນໍ້າຕານໃນເລືອດ, ຕ້ານມະເຮັງ



**ເຫັດຂອບຂາແຂງ Amauroderma sericatum (Lloyd) Wakefield**

ປົວຕັບທ້ອງຊີມນໍ້າ



**ເຫັດຊີ້ນ *Ganoderma applanatum* (Pers. Ex Wallr. Patouillard**

ລົດນໍ້າຕານໃນເລືອດ, ຕ້ານມະເຮັງ



**ເຫັດນົມເສືອ, ເຫັດຫອນເຫງືອກ *Lanosus sacer* (Afzel. ex Fr.) Ryvarden**

ປົວອັກເສບເຕົ້ານົມ

## 28. ອ່ຽນດ່ອນ (Ien Don)

**ຊື່ວິທະຍາສາດ** : *Eurycoma harmandiana* **Pierre**

***ຕະກຸນພືດ*** : **SIMAROUBACEAE**

**ຊື່ອື່ນໆ** : **ຢາຮາກດ່ຽວ**

**ພັນລະນາລັກສະນະພືດແຫ້ງ:** ຮາກດ່ຽວສີນ້ຳຕານເຂັ້ມແກມສີຂີ້ເທົ່າ, ທາງສີຂາວແກມເຫຼືອງ, ມີລົດຂົມ

***ສ່ວນໃຊ້ເປັນຢາ*** : ຮາກ

***ຄຸນປະໂຫຍດ ແລະ ວິທີໃຊ້*** **:** ບຳລຸງກຳລັງ, ປົວໄຂ້ຮ້ອນ



## 29. ເຟກຫອມ (Fek Hom)

**ຊື່ວິທະຍາສາດ : *Vetiveria zizanioides* (L.) Nash**

**Synonyms : *Andropogon muricatus* Retz., *A. zazanioides* Urban, *A. squarrosus* L.f.**

**ຕະກຸນພືດ : POACEAE/ GRAMINEA**

**ພັນລະນາລັກສະນະພືດແຫ້ງ:** ໜົດຕົ້ນສີນ້ຳຕານຂາວ, ນ້ຳມັນຫອມລະເຫີຍສີເຫຼືອງໃສ

**ສ່ວນໃຊ້ເຮັດຢາ**: ໜົດຕົ້ນ, ນ້ຳມັນ

**ຄຸນປະໂຫຍດ :** ບຳລຸງເລືອດ



## 30. ເຄືອແຮມ ( Kheua Haem )

**ຊື່ວິທະຍາສາດ : -** ***Coscinium fenestratum*** **(Gaertn.) Colebrooke** (ແຮມເຫຼືອງ)***Synonyms*** **:** ***Coscinium usittatum*** **Pierre,**

- ***Fibraurea tintoria*** **Lour. or** ***F. recisa*** **Pierre** ( ແຮມຂຽວ, ແດງດ່າງ)

***ຕະກຸນພືດ*** **: MENISPERMACEAE**

**ພັນລະນາລັກສະນະພືດແຫ້ງ:** ເຄືອ, ຮາກມີສີເຫຼືອງ, ລົດຂົມ

**ສ່ວນໃຊ້ເຮັດຢາ:** ເຄືອ, ຮາກ

**ຄຸນປະໂຫຍດ :** ປົວທ້ອງບິດ, ທ້ອງຖອກ, ເບົາຫວານ



***Coscinium fenestratum*** **(Gaertn.) Colebrooke** (ແຮມເຫຼືອງ)



***Fibraurea tintoria*** **Lour. or** ***F. recisa*** **Pierre (ແຮມຂຽວ)**

## 31. ກຳລັງເສືອໂຄ່ງໜາມ (Kam Lang Seua Khong Nam)

**ຊື່ວິທະຍາສາດ** : *Zizyphus attopoensis* **Pierre**

***ຕະກຸນພືດ*** : **RHAMNACEAE**

**ຊື່ອື່ນໆ : ກຳລັງເສືອໂຄ່ງໜາມ (ສະຫວັນນະເຂດ)**

**ພັນລະນາລັກສະນະພືດແຫ້ງ:** ຮາກສີນ້ຳຕານເຂັ້ມ

**ສ່ວນໃຊ້ເຮັດຢາ:** ຮາກ, ລາ

**ຄຸນປະໂຫຍດ :** ບຳລຸງກຳລັງ



## 32. ເກດສະໜາ (Ket Sa Na)

**ຊື່ວິທະຍາສາດ** : ***Aquilaria crassna*** **Pierre**

***ຕະກຸນພືດ*** : **THYMELEACEAE**

**ຊື່ອື່ນ:** ໄມ້ຫອມ (ພາກຕາເວັນອອກ), ປໍເຫືອງ, ໄມ້ດາ

**ພັນລະນາລັກສະນະພືດແຫ້ງ:** ແກ່ນໄມ້ເຂົ້າເກັດສີດໍາ, ສີນໍ້າຕານ ແລະ ນໍ້າມັນສີດໍາ, ສີນໍ້າຕານ

**ສ່ວນໃຊ້ເຮັດຢາ:** ພາກສ່ວນເນື້ອໄມ້ດໍາ, ນໍ້າມັນ ແລະ ໝາກ

**ຄຸນປະໂຫຍດ ແລະ ວິທີການນໍາໃຊ້:** ບໍາລຸງເລືອດ, ບໍາລຸງຫົວໃຈ, ປົວຕັບ, ປອດ,ແກ້ອາການຮາກ, ວິນວຽນ ແລະ ເຈັບຫົວ ແລະ ແກ້ເຈັບປວດຕາມຂໍ້.



## 33. ຫວ້ານຫົວຕໍ່ (Vane Hoa Tor)

**ຊື່ວິທະຍາສາດ : *Disporopsis longifolia* Craib.**

***ຕະກູນພືດ*** **: ASPARAGACEAE**

**ພັນລະນາລັກສະນະພືດແຫ້ງ:** ຫົວແຫ້ງສີນ້ຳຕານເຂັ້ມ.

**ສ່ວນໃຊ້ເຮັດຢາ:** ຫົວ

**ຄຸນປະໂຫຍດ :** ບຳລຸງສຸຂະພາບ, ບຳລຸງກຳລັງ







## 34. ຕີນຮຸ້ງ (Tin Houng)

**ຊື່ວິທະຍາສາດ : *Paris marmorata* Stearn**
**ຕະກຸນພືດ : TRILLIACEAE**

**ຊື່ອື່ນໆ : ຫວ້ານຫົວຂັ້ນ, ຄັນຈ້ອງ**

**ພັນລະນາລັກສະນະພືດແຫ້ງ:** ຫົວແຫ້ງສີນ້ຳຕານແກມຂາວ.

**ສ່ວນໃຊ້ເຮັດຢາ:** ຫົວ

**ຄຸນປະໂຫຍດ :** ບຳລຸງ, ປົວຄົນຈ່ອຍເຮັດໃຫ້ມີແຮງ, ປົວກະເພາະ





## 35. ປອມບີກະທິງ ( Pom Bi Ka Thing)

**ຊື່ວິທະຍາສາດ** : ***Panax vietnamensis*** **Ha et Grushv**

***ຕະກູນພືດ*** : **ARALIACEAE**

**ຊື່ອື່ນໆ : ໂສມລາວ, ໂສມພະຍາອິນ**

**ພັນລະນາລັກສະນະພືດແຫ້ງ:** ຫົວແຫ້ງສີດໍາແກມສີນໍ້າຕານເປັນຂໍ້, ມີລິດຂົມ

**ສ່ວນໃຊ້ເຮັດຢາ:** ຫົວ

**ຄຸນປະໂຫຍດ :** ບໍາລຸງສຸຂະພາບ



## 36. ເຂົາໄກ້ (Khao Kai)

**ຊື່ວິທະຍາສາດ : *Curculigo orchidoides* Gaertn**

**Synonym: *Curculigo ensifolia* R. Br.,**

***ຕະກຸນພືດ* : HYPOXIDACEAE**

**ພັນລະນາລັກສະນະພືດແຫ້ງ:** ຫົວແຫ້ງສີນ້ຳຕານແດງ

**ສ່ວນໃຊ້ເຮັດຢາ:** ຣາກຫົວ

**ຄຸນປະໂຫຍດ :** ບຳລຸງ





## 37. ໝາກແໜ່ງທຸກຊະນິດ (Mak Naeng)

**ຊື່ວິທະຍາສາດ** : ***Amomum*** **spp.**

***ຕະກຸນພືດ*** : **ZINGIBERACEAE**

**ຊື່ອື່ນໆ** : ໝາກແໜ່ງແດງ; ແໜ່ງປ່າ, ແໜ່ງຂຽວ; ແໜ່ງຕາຄວາຍ; ແໜ່ງຫົວໂລ້ນ

**ພັນລະນາລັກສະນະພືດແຫ້ງ**: ໝາກແຫ້ງບໍ່ປອກເປືອກມີຂົນໜາມອ່ອນສີດຳ, ໝາກປອກເປືອກສີນ້ຳຕານເຂັ້ມແກມສີດຳ

**ສ່ວນໃຊ້ເຮັດຢາ:** ແກ່ນໝາກ

**ຄຸນປະໂຫຍດ :** ບຳລຸງສຸຂະພາບ



## 38. ໝາກຈອງບານ (Mak Chong Ban)

**ຊື່ວິທະຍາສາດ : *Sterculia lychnophora* Hance**

**Synonym: *Scaphium macropodum* Beaumee ;**

***Scaphium lychnopholum* (Hance) Pierre *; Scaphium affinis* Pierre**

***ຕະກຸນພືດ*  :  STERCULIACEAE**

**ພັນລະນາລັກສະນະພືດແຫ້ງ:** ໝາກມີສອງປີກ, ໝາກແຫ້ງສີນ້ຳຕານເຂັ້ມແກມສີດຳ,

**ສ່ວນໃຊ້ເຮັດຢາ:** ໝາກ

**ຄຸນປະໂຫຍດ :** ຢາເປັນ, ແກ້ຮ້ອນໃນ



## 39. ຫົວສາມພັນຮູ (Hoa Sam Phanh Hou)

**ຊື່ວິທະຍາສາດ** : ***Hydnophytum formicarum*** **Jack**

***ຕະກຸນພືດ*** : **RUBIACEAE**

**ຊື່ອື່ນໆ** : **ຫົວຮູພັນ**

**ພັນລະນາລັກສະນະພືດແຫ້ງ:** ຫົວສີນ້ຳຕານເຂັ້ມ, ມີຮູຈຳນວນຫຼາຍ

**ສ່ວນໃຊ້ເຮັດຢາ:** ຫົວ

**ຄຸນປະໂຫຍດ :** ປົວເບົາຫວານ



## 40. ປິບປີແດງ (Pit pi daeng)

**ຊື່ວິທະຍາສາດ** : ***Plumbago indica*** **L.**

**Synonym :** ***P. rosea*** **L.,** ***P. coccinea*** **Boiss.,** ***Thela coccinea*** **Lour.**

***ຕະກຸນພືດ*** : **PLUMBAGINACEAE**

**ພັນລະນາລັກສະນະພືດແຫ້ງ:** ລຳ ແລະ ຮາກແຫ້ງສີດຳແກມນ້ຳຕານ

**ສ່ວນໃຊ້ເຮັດຢາ:** ຮາກ

**ຄຸນປະໂຫຍດ :** ຟອກເລືອດ, ບຳລຸງ





## 41. ເລັບມືນາງ (Lep Meu Nang)

**ຊື່ວິທະຍາສາດ :** ***Schefflera elliptica*** **Harms.**

***ຕະກຸນພືດ*** **:** **ARALIACEAE**

**ຊື່ອື່ນໆ :** ຝາມືຜີນ້ອຍ, ຝ່າມືຟາຣາຣາຍ

**ພັນລະນາລັກສະນະພືດແຫ້ງ:** ເປືອກສີນ້ຳຕານ

**ສ່ວນໃຊ້ເຮັດຢາ:** ເປືອກ

**ຄຸນປະໂຫຍດ :**

ປະຖົວຂໍ່, ບຳລຸງ





## 42. ໜາມເລັບຮຸ້ງ (Nam Lep Houng)

**ຊື່ວິທະຍາສາດ : *Nauclea rhynchophylla* Miq.**

***Synonyms*** **: *Ourouparia rhynchophylla* Matsum**

***Uncaria rhynchophylla* (Miq.) Jack**

***ຕະກຸນພືດ*** **: Rubiaceae**

**ພັນລະນາລັກສະນະພືດແຫ້ງ:** ໜາມຂໍຄືຂໍເບັດສີນ້ຳຕານ

**ສ່ວນໃຊ້ເຮັດຢາ**: ລາ, ໜາມຂໍ

**ຄຸນປະໂຫຍດ** : ປະຕິງຂໍ່, ລົດຄວາມດັນເລືອດ



## 43. ລື້ຫຼັງລາຍ (Leu Lang Lai)

**ຊື່ວິທະຍາສາດ : *Aeschynanthus marmoratus* F. Moore.**

***ຕະກຸນພືດ*** : **GESNERIACEAE**

**ພັນລະນາລັກສະນະພືດແຫ້ງ:** ໃບໜາ, ແຜ່ນໃບເບື້ອງລຸ່ມລາຍສີແດງເຂັ້ມ, ເບື້ອງເທິງລາຍສີຂຽວເຫຼືອງອ່ອນ

**ສ່ວນໃຊ້ເຮັດຢາ:** ໝົດຕົ້ນ

**ຄຸນປະໂຫຍດ :** ປິ່ວເສັ້ນປະສາດ, ບຳລຸງ





## 44. ຢານາງຊ້າງ (Ya Nang Xang)

**ຊື່ວິທະຍາສາດ : *Asparagus cochinchinensis* (Lour.) Merr.**

***Synonyms* : *Anguillaria cochinchinensis* Spreng., *Asparagopsis sinica* Miq. *Asparagus falcatus* Thunb. (non Lin.), *A. insularis* Hance.,**

***ຕະກຸນພືດ*  : ASPARAGACEAE**

**ຊື່ອື່ນໆ** : ຜັກຊີຊ້າງ

**ພັນລະນາລັກສະນະພືດແຫ້ງ:** ຫົວແຫ້ງສີນ້ຳຕານແກມສີດຳ

**ສ່ວນໃຊ້ເຮັດຢາ:** ຮາກຫົວ

**ຄຸນປະໂຫຍດ :** ປົວໄຂ້ຮ້ອນ, ຕ້ານເຊື້ອ ເອສ ໄອ ວີ ເອດສ໌ (HIV-AIDS)



## 45. ອີ່ຕູ່ຕົ້ນ (I Tu Ton)

**ຊື່ວິທະຍາສາດ : *Cinnamomum camphora* (L.) Priesl.,**

**Synonym:** *Camphora officinalis* Nees, *C. officinarum* Nees & Eberm., *Laurus camphora* L.

***ຕະກຸນພືດ*** **: LAURACEAE**

**ພັນລະນາລັກສະນະພືດແຫ້ງ:** ລຳຕົ້ນມີກິ່ນນ້ຳມັນຫອມລະເຫີຍ

**ສ່ວນໃຊ້ເຮັດຢາ:** ນ້ຳມັນ

**ຄຸນປະໂຫຍດ :** ແກ້ວິນວຽນ



## 46. ໄມ້ທະໂລ້. (Mai Tha Lo)

**ຊື່ວິທະຍາສາດ : *Cinnamomum pathenoxylon*(Jack) Ness**

**Synonym: *Cinnamomum porrectum*(Roxb.) Kosterm.**

***ຕະກຸນພືດ*** **: LAURACEAE**

**ຊື່ອື່ນໆ :** ໄມ້ໝີຄາຍ (ຊື່ຊຽງຂວາງ), ໄມ້ສີໄຄຕົ້ນ (ຊື່ເຂດແຂວງວຽງຈັນ), ໄມ້ທາໂລຫອມ(ຊື່ຈີນ), ກາລະບູນ(ໄທ)

**ພັນລະນາລັກສະນະພືດແຫ້ງ:** ເປືອກຄາຍ ລຳ ແລະ ຮາກມີກິ່ນນ້ຳມັນຫອມລະເຫີຍ, ນ້ຳມັນສີເຫຼືອງອ່ອນ.

**ສ່ວນໃຊ້ເຮັດຢາ:** ນ້ຳມັນ

**ຄຸນປະໂຫຍດ :** ແກ້ວິນວຽນ





## 47. ມ້ອຍ. (Mouay )

**ຊື່ວິທະຍາສາດ : *Gnetum latifolium* BL.**

***ຕະກຸນພືດ*** **: GNETACEAE**

**ພັນລະນາລັກສະນະພືດແຫ້ງ:** ລຳເຄືອລາຍເປັນວົງປີ ແລະ ມີນ້ຳຢາງແຫ້ງສີດຳແກມແດງເຂັ້ມ.

**ສ່ວນໃຊ້ເຮັດຢາ:** ລຳເຄືອ

**ຄຸນປະໂຫຍດ :** ກະເພາະ, ປະດົງຂໍ່





## 48. ຫວ້ານຫາງຊ້າງ. (Vanh Hang Xang)

**ຊື່ວິທະຍາສາດ : *Grammatophyllym speciosum* Bl.**

***ຕະກຸນພືດ*** **: ORCHIDACEAE**

**ຊື່ອື່ນໆ :** ແຮນທຳທານ

**ພັນລະນາລັກສະນະພືດແຫ້ງ: ເປັນປ້ອງຂໍ້, ສີນ້ຳຕານເຂັ້ມ ແລະ ລຳມີເສັ້ນໄຍ**

**ສ່ວນໃຊ້ເຮັດຢາ:** ໝົດຕົ້ນ

**ຄຸນປະໂຫຍດ :** ອັກເສບຫຼອດລົມ, ປອດ ແລະ ເບົາຫວານ







## 49. ເຄືອນົມໝູ. (Kheua Nom Nou)

**ຊື່ວິທະຍາສາດ** : *Neuropeltis racemosa* **Wall.**

***ຕະກຸນພືດ*** : **CONVOLVULACEAE**

**ພັນລະນາລັກສະນະພືດແຫ້ງ:** ເປືອກເປັນຕູດ, ແກ່ນລຳເຄືອເປັນເສັ້ນສີນ້ຳຕານ.

**ສ່ວນໃຊ້ເຮັດຢາ:** ລຳເຄືອ

**ຄຸນປະໂຫຍດ :** ບຳລຸງແມ່ກຳ, ບຳລຸງທາດ



## 50. ຫົວດຸກເດືອຫຸກຊະນິດ. (Hoa Duk Deua)

**ຊື່ວິທະຍາສາດ : *Amorphophallus* spp.**

***ຕະກຸນພືດ*** **: ARACEAE**

**ຊື່ອື່ນໆ : ກະບຸກ**

**ພັນລະນາລັກສະນະພືດແຫ້ງ:** ຫົວທີ່ຊອຍຕາກແຫ້ງສີຂາວ

**ສ່ວນໃຊ້ເຮັດຢາ:** ຫົວ

**ຄຸນປະໂຫຍດ :** ເປັນອາຫານເສີມເພື່ອລຶດຄວາມອ້ວນ



# ເອກະສານອ້າງອີງ


1. ກອງມະນີ ສີດາລາ ແລະ ບຸນທໍາ ປັນຍາຈິດ. 2000. ***ຕໍາລາຢາພື້ນເມືອງສິບທອດ*** ເຫຼັ້ມ III. ສະຖາບັນການແພດ ແລະ ການຢາພື້ນເມືອງ.
2. ສົມສະນິດ ບົວມະນີວົງ ແລະ ອ່ອນວິໄລ ສຸລິຍາ. 2000. ***ປຶ້ມ ຕົ້ນໄມ້ເປັນຢາທີ່ພົບໃນປ່າສະຫງວນຫ້ວຍຍາງ ແລະ ປ່າສະຫງວນດົງໂພສີ.*** ສະຖາບັນການແພດ ແລະ ການຢາພື້ນເມືອງ.
3. ສະຖາບັນຄົ້ນຄວ້າຕົ້ນໄມ້ເປັນຢາ. 1996. ***ຕໍາລາຢາພື້ນ ເມືອງສິບທອດ*** ເຫຼັ້ມ II. ສະຖາບັນການແພດ ແລະ ການຢາພື້ນ ເມືອງ.
4. ສົມສະນິດ ບົວມະນີວົງ, ມົວຈັນ ໄຊວື ແລະ ອ່ອນວິໄລ ສຸລິຍາ. 2008. ***ຕົ້ນໄມ້ເປັນຢາທີ່ເລືອກເຟັ້ນ ແລະ ນໍາໃຊ້ໃນຊຸມຊົນ.*** ສະຖາບັນການແພດ ແລະ ການຢາພື້ນເມືອງ.
5. ພະອາຈານ ຈະລຸນ ອະຊິລະລັງສີ ແລະ ຈັນມີ ສິດທິມະໂນທໍາ. 1985. ***ຕໍາລາແພດສາດພື້ນເມືອງລາວ.*** ສະພາວິທະຍາສາດ ແລະ ເຕັກນິກແຫ່ງລັດ.
6. ອ່ອນວິໄລ ສຸລິຍາ. 2012. ວິທະຍານິພົນລະດັບປະລິນຍາໂທ ກ່ຽວກັບ ***ຄວາມຮູ້ກ່ຽວກັບການນໍາໃຊ້ຕົ້ນໄມ້ເປັນຢາຂອງເຜົ່າບໍ, ມະກອງ ແລະ ໄຕເມີ້ຍ*** ຢູ່ເຂດເມືອງນາກາຍ, ແຂວງຄໍາມ່ວນ.
7. ວິຈິດ ລໍາໄຊ ແລະ ຮສ. ດຣ. ບົວໄຂຄອນ ສະແຫວງສຶກສາ. 2005. **ຄູ່ມືພາກສະ ໜາມ ພືດເສດຖະກິດບາງຊະນິດທີ່ຫາຍາກ ແລະ ມີແນວໂນມໃກ້ຈະດັບສູນ ໃນ ສປປ ລາວ.** ມະຫາວິທະຍາໄລແຫ່ງຊາດ.
8. Elkington, B.G; Southavong, B; Sydara, K; Souliya, O; Vanthanouvong, M; Nettavong, K; Thammachack, B; Dennis H. Pak, Riley,M.C; Franzblau,S.G; Soejarto,D.D. 2009. ***Biological Evaluation of Plants of Laos Used in the Treatment of Tuberculosis in Lao Traditional Medicine***. Pharmaceutical (Formerly international Journal of Pharmacognosy), Volume 47, Number 1, pp. 26-33(8). Informa Healthcare.

9. Elkington, B.G; Southavong , B; Sydara, K; Bouamanyvong, S; Souliya, O; Xayveu, M; Vanthanouvong, M; Riley,M; Panyachit, B; Thammachak, B; Seojarto, D.D.***2007. The research for Anti-Malarial Plants in Lao Palm-Leaf Manuscripts***. Adams, K.L; and Hudak,T, J. 2010. Multidisciplinary Perspectives on Lao studies.
10. Newman, M; Ketphanh, S; Svengsuksa, B; Thomas, P; Sengdala, K; Lamxay, V; and Armstrong, K. 2007. ***A Check list of the Vascular Plants of Lao PDR.*** Royal Botanic Garden Edinburgh, Scoland, UK.
11. Matin Greijmans, Sounthone Ketphanh, Vichith Lamxay and Khamphone Sengdala. 2007. **Non Timber Forest Products in the Lao PDR.**
12. PHAM-HOANG HO, 1999, 2000, 2003. ***An Illustrated Flora of Vietnam*** tome I, II, III. Nha Xuat Ban Tre, Ho Chi Minh.
13. Southavong, B; Sydara, Souliya, O; K; Phonlavong, K; Xayvue, M. 2012. Volume I. ***Medicinal Plants and Herbs of Laos***. Institute of Traditional Medicine.